ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ 0131

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ.........................../ກປ

ນະຄອນຫຼວງວຽງຈັນ, ວັນທີ 27 JAN 2021

# ຄຳແນະນຳ

## ກ່ຽວກັບ ການຄຸ້ມຄອງ ການເຄື່ອນຍ້າຍໄມ້ທ່ອນ ຈາກເຂດປ່າຜະລິດ, ເຂດຫັນປ່ຽນທີ່ດິນປ່າໄມ້ ແລະ ເຂດກໍ່ສ້າງພື້ນຖານໂຄງລ່າງ ແຕ່ສະໜາມ I ຫາ ສະໜາມ II ແລະ ສະໜາມ III

- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ເລກທີ 99/ນຍ, ລົງວັນທີ 09 ມີນາ 2017 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້;
- ອີງຕາມ ໜັງສືສະເໜີ ຂອງກົມປ່າໄມ້ ເລກທີ 5476/ກປມ, ລົງວັນທີ 16 ຕຸລາ 2020;
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີ ຂອງກົມນະໂຍບາຍ ແລະ ນິຕິກຳ ເລກທີ 0847/ກບນ, ລົງວັນທີ 03 ພະຈິກ 2020.

## ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ອອກຄຳແນະນຳ:

## I. ຈຸດປະສົງ

ຄຳແນະນຳສະບັບນີ້ ກຳນົດ ວິທີການ ແລະ ຂັ້ນຕອນ ກ່ຽວກັບ ການຄຸ້ມຄອງ ການເຄື່ອນຍ້າຍໄມ້ທ່ອນ ທີ່ຂຸດຄົ້ນຈາກເຂດປ່າຜະລິດ, ເຂດຫັນປ່ຽນທີ່ດິນປ່າໄມ້ ແລະ ເຂດກໍ່ສ້າງພື້ນຖານໂຄງລ່າງ ເພື່ອໃຫ້ມີຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດ ໃນຂອບເຂດທົ່ວປະເທດ ແນໃສ່ຮັບປະກັນຄວາມຖືກຕ້ອງ ແລະ ຢັ້ງຢືນແຫຼ່ງທີ່ມາຂອງໄມ້ ແຕ່ສະໜາມ I ຫາ ສະໜາມ II ແລະ ສະໜາມ III ໃຫ້ຖືກຕ້ອງຕາມເຕັກນິກວິຊາການ ແລະ ກົດໝາຍກຳນົດ.

## II. ການຄຸ້ມຄອງ ການເຄື່ອນຍ້າຍໄມ້ທ່ອນ

ການຄຸ້ມຄອງ ການເຄື່ອນຍ້າຍໄມ້ທ່ອນ ຈາກເຂດປ່າຜະລິດ, ເຂດຫັນປ່ຽນທີ່ດິນປ່າໄມ້ ແລະ ເຂດກໍ່ສ້າງພື້ນຖານໂຄງລ່າງ ແຕ່ສະໜາມ I ຫາ ສະໜາມ II ແລະ ສະໜາມ III ຫຼື ໂຮງງານ ປະກອບດ້ວຍ ສິບຫົກ ຂັ້ນຕອນ ດັ່ງນີ້:

### 1. ການໝາຍຕົ້ນຕັດ

#### 1.1. ເຂດປ່າຜະລິດ

ການໝາຍຕົ້ນໄມ້ທີ່ຈະຕັດຢູ່ໃນເຂດປ່າຜະລິດ ຕ້ອງໝາຍຕາມນ້ຳເບີທີ່ໄດ້ບັນທຶກໄວ້ໃນບົດລາຍງານ ການສຳຫຼວດກ່ອນການຂຸດຄົ້ນໄມ້ ທີ່ໄດ້ຮັບອະນຸມັດຈາກລັດຖະບານ ແລະ ໃຫ້ປະຕິບັດຕາມຮູບທີ 1 ລຸ່ມນີ້:




**ຮູບທີ 1:** ການໝາຍຕົ້ນຕັດ ໃນເຂດປ່າຜະລິດ

### 1.2. ເຂດທັບປ່ຽນທີ່ດິນປ່າໄມ້ ແລະ ເຂດກໍ່ສ້າງພື້ນຖານໂຄງລ່າງ

ການໝາຍຕົ້ນໄມ້ທີ່ຈະຕັດຢູ່ໃນເຂດທັບປ່ຽນທີ່ດິນປ່າໄມ້ ແລະ ເຂດກໍ່ສ້າງພື້ນຖານໂຄງລ່າງ ທີ່ສຳຫຼວດແລ້ວ (100%) ໃຫ້ປະຕິບັດຕາມຮູບທີ 2 ລຸ່ມນີ້:




**ຮູບທີ 2:** ການໝາຍຕົ້ນຕັດ ໃນເຂດທັບປ່ຽນທີ່ດິນປ່າໄມ້ ແລະ ເຂດກໍ່ສ້າງພື້ນຖານໂຄງລ່າງ

ສຳລັບ ເຂດທີ່ສຳຫຼວດດ້ວຍການສຸ່ມຕົວຢ່າງ ເພື່ອປະເມີນບໍລິມາດໄມ້ ແມ່ນບໍ່ຈຳເປັນຕ້ອງໝາຍຕົ້ນຕັດ, ແຕ່ພາຍຫຼັງຕັດລົງແລ້ວ ຕ້ອງໄດ້ໝາຍນ້ຳເບີຄຸ້ມ ຫຼື ຕອນຂຸດຄົ້ນ, ເບີຕົ້ນ ແລະ ທ່ອນໄມ້, ເລກທີທ່ອນໄມ້ ໃສ່ໜ້າໄມ້ທ່ອນ. ສຳລັບ ເຂດທັບປ່ຽນທີ່ດິນປ່າໄມ້ ແລະ ເຂດກໍ່ສ້າງພື້ນຖານໂຄງລ່າງ ທີ່ບໍ່ສາມາດກວດກາຄືນຈຸດທີ່ຕັ້ງຂອງຕໍ່ໄມ້ເພື່ອຢັ້ງຢືນແຫຼ່ງທີ່ມາຂອງໄມ້ ເຊັ່ນ: ເຂື່ອນໄຟຟ້າ, ບໍ່ແຮ່, ແລວທາງ ແລະ ເຂດອື່ນໆ ແມ່ນບໍ່ຈຳເປັນໝາຍເບີຕົ້ນໃສ່ຕໍ່ໄມ້.

## 2. ການຕັດໄມ້

ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ເປັນຜູ້ອອກໃບອະນຸຍາດຂຸດຄົ້ນໄມ້ ໃນເຂດປ່າຜະລິດ, ເຂດທັບປ່ຽນທີ່ດິນປ່າໄມ້ ແລະ ເຂດກໍ່ສ້າງພື້ນຖານໂຄງລ່າງ ຕາມແບບພິມ 1 ບົນພື້ນຖານແຜນຂຸດຄົ້ນໄມ້ປະຈຳປີ ທີ່ລັດຖະບານອະນຸມັດ ແລະ ປະຕິບັດຕາມຫຼັກການ ດັ່ງນີ້:

- ການຕັດໄມ້ໃນເຂດປ່າຜະລິດ ຕ້ອງປະຕິບັດຕາມບົດແນະນຳ ທາງດ້ານເຕັກນິກວິຊາການ ກ່ຽວກັບການສຳຫຼວດປ່າໄມ້ ແລະ ຫຼັກການຂຸດຄົ້ນໄມ້ໃນປ່າຜະລິດ ຂອງກົມປ່າໄມ້ ທີ່ມີຜົນບັງຄັບໃຊ້ໃນແຕ່ລະໄລຍະ ໂດຍແມ່ນພະນັກງານຄຸ້ມຄອງການຂຸດຄົ້ນໄມ້ ເປັນຜູ້ບັນທຶກການຕັດໄມ້ ຕາມແບບພິມ 2 ກ;
- ການຕັດໄມ້ໃນເຂດທັບປ່ຽນທີ່ດິນປ່າໄມ້ ແລະ ເຂດກໍ່ສ້າງພື້ນຖານໂຄງລ່າງ ຕ້ອງຕັດດ້ວຍຮູບແບບຕັດກ້ຽງ ໃນຂອບເຂດທີ່ໄດ້ຮັບອະນຸຍາດ ໂດຍແມ່ນຜູ້ຕັດປ້ຳ ເປັນຜູ້ບັນທຶກການຕັດໄມ້ ຕາມແບບພິມ 2 ຂ.

### 3. ການບັ່ນທ່ອນໄມ້

ການບັ່ນທ່ອນໄມ້ໃນເຂດປ່າຜະລິດ, ເຂດຫັນປ່ຽນທີ່ດິນປ່າໄມ້ ແລະ ເຂດກໍ່ສ້າງພື້ນຖານໂຄງລ່າງ ແມ່ນອີງໃສ່ເງື່ອນໄຂຕົວຈິງ ໂດຍຂຶ້ນກັບເປົ້າໝາຍຂອງການນຳໃຊ້ ແນໃສ່ຮັບປະກັນ ບໍ່ໃຫ້ຄຸນນະພາບໄມ້ຕົກ ແລະ ປອດໄພໃນການຂົນສົ່ງ. ການບັ່ນທ່ອນໄມ້ແຕ່ລະທ່ອນ ຕ້ອງຈົ່ງສິ້ນໄມ້ໄວ້ ບໍ່ໃຫ້ເກີນ ຫ້າ ຊັງຕີແມັດ ສໍາລັບ ໄມ້ບັນຊີ I ແລະ ບໍ່ເກີນ ສິບ ຊັງຕີແມັດ ສໍາລັບ ໄມ້ບັນຊີ II ແລະ ໄມ້ບັນຊີ III.

### 4. ການໝາຍໜ້າໄມ້ຢູ່ບ່ອນຕັດປ້ຳ

ການໝາຍໜ້າໄມ້ (ໝາຍຊົ່ວຄາວ) ຢູ່ບ່ອນຕັດປ້ຳ ແມ່ນແຕ້ມເຄື່ອງໝາຍ ເບີຕົ້ນ ແລະ ເລກທີທ່ອນໄມ້ໃສ່ໜ້າໄມ້ທ່ອນ ທີ່ໄດ້ບັ່ນທ່ອນແລ້ວ ໂດຍໃຊ້ສໍແຕ້ມໜ້າໄມ້ ຫຼື ນ້ຳສີ ແລະ ໃຫ້ປະຕິບັດ ດັ່ງນີ້:

**4.1.** ການໝາຍໜ້າໄມ້ ທີ່ຂຸດຄົ້ນຈາກເຂດປ່າຜະລິດ, ເຂດຫັນປ່ຽນທີ່ດິນປ່າໄມ້ ແລະ ເຂດກໍ່ສ້າງພື້ນຖານໂຄງລ່າງ ທີ່ສໍາຫຼວດແລ້ວ (100%) ແມ່ນໃຫ້ໝາຍ ເບີຕົ້ນ ແລະ ເລກທີທ່ອນໄມ້ ຕາມຮູບທີ 3.




**ຮູບທີ 3:** ການໝາຍໜ້າໄມ້ຢູ່ເຂດຂຸດຄົ້ນຈາກປ່າຜະລິດ, ເຂດຫັນປ່ຽນທີ່ດິນປ່າໄມ້ ແລະ ເຂດກໍ່ສ້າງພື້ນຖານໂຄງລ່າງ

**4.2.** ການໝາຍໜ້າໄມ້ ທີ່ຂຸດຄົ້ນຈາກເຂດປ່າຜະລິດ ທີ່ໄດ້ຮັບການຢັ້ງຢືນການຄຸ້ມຄອງປ່າໄມ້ຈາກ ສະພາບໍລິຫານປ່າໄມ້ (Forest Steward Council) ແມ່ນໃຫ້ໃສ່ເຄື່ອງໝາຍ FSC, ເບີຕົ້ນ ແລະ ເລກທີທ່ອນໄມ້ ຕາມຮູບທີ 4.




**ຮູບທີ 4:** ການໝາຍໜ້າໄມ້ຢູ່ເຂດຂຸດຄົ້ນຈາກປ່າຜະລິດ ທີ່ໄດ້ຮັບການຢັ້ງຢືນ

**4.3.** ການໝາຍໜ້າໄມ້ ທີ່ຂຸດຄົ້ນຈາກເຂດທັນປ່ຽນທີ່ດິນປ່າໄມ້ ແລະ ເຂດກໍ່ສ້າງພື້ນຖານໂຄງລ່າງ ທີ່ສໍາຫຼວດດ້ວຍການສຸ່ມຕົວຢ່າງ ເພື່ອປະເມີນບໍລິມາດໄມ້ ແມ່ນໃຫ້ໃສ່ລະຫັດໜ່ວຍຂຸດຄົ້ນ, ເບີຕອນຂຸດຄົ້ນ, ເບີຕົ້ນໄມ້ ແລະ ເລກທີທ່ອນໄມ້ ໂດຍແມ່ນໜ່ວຍຂຸດຄົ້ນ ຫຼື ຜູ້ຂຸດຄົ້ນ.

ໃນກໍລະນີ ມີຫຼາຍໜ່ວຍຂຸດຄົ້ນ ທີ່ເຂົ້າຂຸດຄົ້ນໃນຕອນດຽວກັນ ເພື່ອຫຼີກລ້ຽງການໝາຍເບີຕົ້ນໄມ້ ແລະ ເລກທີທ່ອນໄມ້ຊໍ້າກັນ ແມ່ນໃຫ້ໝາຍລະຫັດໜ່ວຍຂຸດຄົ້ນ ຕາມຮູບທີ 5.




**ຮູບທີ 5:** ການໝາຍໜ້າໄມ້ ທີ່ຂຸດຄົ້ນຈາກເຂດທັນປ່ຽນທີ່ດິນປ່າໄມ້ ແລະ ເຂດກໍ່ສ້າງພື້ນຖານໂຄງລ່າງ ທີ່ສໍາຫຼວດດ້ວຍການສຸ່ມຕົວຢ່າງ

## 5. ການບັນທຶກໄມ້ທ່ອນສະໜາມ I

ການບັນທຶກຂໍ້ມູນຕົ້ນໄມ້ທີ່ຖືກຕັດໃນເຂດປ່າຜະລິດ ຕ້ອງແມ່ນພະນັກງານຄຸ້ມຄອງການຂຸດຄົ້ນໄມ້ເປັນຜູ້ບັນທຶກ ຕາມແບບພິມ 2 ກ. ສ່ວນການບັນທຶກຂໍ້ມູນຕົ້ນໄມ້ທີ່ຖືກຕັດໃນເຂດທັນປ່ຽນທີ່ດິນປ່າໄມ້ ແລະ ເຂດກໍ່ສ້າງພື້ນຖານໂຄງລ່າງ ຕ້ອງແມ່ນຜູ້ຕັດປໍ້າ ເປັນຜູ້ບັນທຶກ ຕາມແບບພິມ 2 ຂ.

## 6. ການເຄື່ອນຍ້າຍໄມ້ທ່ອນ ແຕ່ສະໜາມ I ຫາ ສະໜາມ II

ກ່ອນຈະເຄື່ອນຍ້າຍໄມ້ແຕ່ລະທ່ອນ ອອກຈາກສະໜາມ I ຫາ ສະໜາມ II ພະນັກງານຄຸ້ມຄອງການຂຸດຄົ້ນໄມ້ ຕ້ອງບັນທຶກຂໍ້ມູນ ຕາມແບບພິມ 3 ໂດຍເຮັດເປັນ ສາມ ສະບັບ ເພື່ອໃຫ້ພະນັກງານຄຸ້ມຄອງການຂຸດຄົ້ນໄມ້, ຜູ້ຂັບລົດບັນທຸກໄມ້ທ່ອນ ແລະ ພະນັກງານຜູ້ຮັບຜິດຊອບຄຸ້ມຄອງໄມ້ທ່ອນ ສະໜາມ II.

## 7. ການຮັບໄມ້ທ່ອນເຂົ້າ ສະໜາມ II

ການຮັບໄມ້ທ່ອນເຂົ້າ ສະໜາມ II ແມ່ນຄວາມຮັບຜິດຊອບຂອງພະນັກງານຄຸ້ມຄອງໄມ້ທ່ອນ ສະໜາມ II ໂດຍການສັງລວມເອົາໃບນໍາສົ່ງໄມ້ທ່ອນຂອງລົດແຕ່ລະຄັນ ແຕ່ສະໜາມ I ຫາ ສະໜາມ II ຕາມແບບພິມ 3 ບັນທຶກໃສ່ ແບບພິມ 4 ດ້ວຍລະບົບຄອມພິວເຕີ ແລະ ລະບົບເອກະສານ ແລ້ວນໍາສົ່ງບັນຊີໄມ້ທ່ອນສະໜາມ II ໃຫ້ຂະແໜງປ່າໄມ້ຂັ້ນແຂວງ ເພື່ອສົມທົບກັບໜ່ວຍງານປ່າໄມ້ເມືອງ ວັດແທກ, ຈັດຊັ້ນຄຸນນະພາບ ແລະ ຂຶ້ນບັນຊີໄມ້ທ່ອນ.

## 8. ການວັດແທກ ແລະ ການຈັດຊັ້ນຄຸນນະພາບໄມ້ທ່ອນ

ການວັດແທກໄມ້ທ່ອນ ແມ່ນການວັດແທກໜ້າຕ້າງ ຫຼື ວັດຮອບ ແລະ ລວງຍາວ ຂອງໄມ້ທ່ອນ ເພື່ອຄິດໄລ່ບໍລິມາດໄມ້;

ການຈັດຊັ້ນຄຸນນະພາບໄມ້ ແມ່ນການຕີລາຄາຄຸນນະພາບຂອງໄມ້ທ່ອນ ອອກເປັນປະເພດ ກ, ຂ, ຄ ແລະ ນອກປະເພດ ໂດຍອີງໃສ່ຈຸດຕໍານິທີ່ມີຢູ່ຕາມທ່ອນໄມ້;

ການວັດແທກ ແລະ ຈັດຊັ້ນຄຸນນະພາບໄມ້ທ່ອນ ແມ່ນຄວາມຮັບຜິດຊອບຂອງຂະແໜງປ່າໄມ້ຂັ້ນແຂວງ ສົມທົບກັບ ໜ່ວຍງານກະສິກຳ ແລະ ປ່າໄມ້ເມືອງ ເປັນຜູ້ດຳເນີນການ ຕາມແບບພິມ 5 ບົນພື້ນຖານຂໍ້ມູນທີ່ໄດ້ບັນທຶກໃນແບບພິມ 4. ສຳລັບຫຼັກການ ແລະ ວິທີການ ການວັດແທກ ແລະ ຈັດຊັ້ນຄຸນນະພາບໄມ້ທ່ອນ ລະອຽດ ໃຫ້ປະຕິບັດຕາມລະບຽບການ ທີ່ປະກາດໃຊ້ໃນແຕ່ລະໄລຍະ.

## 9. ການໝາຍໜ້າໄມ້ທ່ອນ ຢູ່ສະໜາມ II

ການໝາຍໜ້າໄມ້ທ່ອນ ຢູ່ສະໜາມ II ໃຫ້ນຳໃຊ້ສີຮອງພື້ນ ຄື: ສີຂຽວ ສຳລັບໄມ້ທ່ອນທີ່ຂຸດຄົ້ນຈາກປ່າຜະລິດ, ສີແດງ ສຳລັບໄມ້ທ່ອນທີ່ຂຸດຄົ້ນຈາກປ່າຜະລິດທີ່ໄດ້ຮັບການຢັ້ງຢືນ ແລະ ສີຟ້າ ສຳລັບໄມ້ທ່ອນທີ່ຂຸດຄົ້ນຈາກເຂດຫັນປ່ຽນທີ່ດິນປ່າໄມ້ ແລະ ເຂດກໍ່ສ້າງພື້ນຖານໂຄງລ່າງ, ສ່ວນການຂຽນເລກລະຫັດ ໃຫ້ນຳໃຊ້ ສີປອນ ເພື່ອບົ່ງບອກເຖິງແຫຼ່ງທີ່ມາ ແລະ ເລກກຳກັບຂອງໄມ້ທ່ອນ ດັ່ງນີ້:

### 9.1. ການຂຽນເລກລະຫັດໃສ່ໜ້າໄມ້ທ່ອນທີ່ຂຸດຄົ້ນຈາກເຂດປ່າຜະລິດ ປະກອບມີ 2 ກຸ່ມ ດັ່ງນີ້:

**1) ກຸ່ມທີ 1** ແມ່ນແຫຼ່ງທີ່ມາຂອງໄມ້ທ່ອນ ຊຶ່ງຂຽນຢູ່ດ້ານເທິງຂອງໜ້າໄມ້ທ່ອນ ໂດຍມີ ສີ່ ເລກລະຫັດ ຄື:

- ເຂດປ່າຜະລິດ (ຕາມລະຫັດເຂດປ່າຜະລິດທີ່ໄດ້ກຳນົດໄວ້ສະເພາະ);
- ເຂດຄຸ້ມຄອງ (ຕາມລະຫັດຂອງເມືອງ ທີ່ກຳນົດໄວ້ໃນປຶ້ມສະຖິຕິແຫ່ງຊາດ);
- ເບີຕົ້ນຕັດ (ທີ່ໄດ້ຄັດເລືອກຕັດ ຕາມແບບພິມ 2 ກ);
- ເລກທີທ່ອນໄມ້ (ເລກລຳດັບ ຂອງທ່ອນໄມ້ ໃນຕົ້ນນັ້ນໆ).

**2) ກຸ່ມທີ 2** ແມ່ນເລກກຳກັບຂອງໄມ້ທ່ອນ ຊຶ່ງຂຽນຢູ່ດ້ານລຸ່ມ ໂດຍມີ ສາມ ເລກລະຫັດ ຄື:

- ເບີທ່ອນ;
- ໜ້າຕ້າງ (ຊັງຕີແມັດ);
- ລວງຍາວ (ຊັງຕີແມັດ).

ສຳລັບວິທີການຂຽນເລກລະຫັດໃສ່ໜ້າໄມ້ທ່ອນ ທີ່ຂຸດຄົ້ນຈາກປ່າຜະລິດ ເບິ່ງຕາມຮູບທີ 6




**ຮູບທີ 6:** ການຂຽນເລກລະຫັດໃສ່ໜ້າໄມ້ທ່ອນ ທີ່ຂຸດຄົ້ນຈາກປ່າຜະລິດ

**ກຸ່ມທີ 1 ແມ່ນແຫຼ່ງທີ່ມາຂອງໄມ້**

**ເລກ 1** ໝາຍເຖິງ ລະຫັດ ເຂດປ່າຜະລິດ ດົງສີທອນ;

**ເລກ 5** ໝາຍເຖິງ ລະຫັດ ເຂດຄຸ້ມຄອງ ທ່າປາງທອງ;

**ເລກ 110** ໝາຍເຖິງ ເບີຕົ້ນຕັດ;

**ເລກ 2** ໝາຍເຖິງ ທ່ອນທີສອງ.

**ກຸ່ມທີ 2 ເລກກຳກັບຂອງໄມ້ທ່ອນ**

**ເລກ 9** ໝາຍເຖິງ ເບີທ່ອນທີເກົ້າ;

**ເລກ 84** ໝາຍເຖິງ ໜ້າຕ້າງ;

**ເລກ 750** ໝາຍເຖິງ ລວງຍາວ.

### 9.2. ການຂຽນເລກລະຫັດໃສ່ໜ້າໄມ້ທ່ອນ ທີ່ຂຸດຄົ້ນຈາກປ່າຜະລິດ ທີ່ໄດ້ຮັບການຢັ້ງຢືນປ່າໄມ້

ການຂຽນເລກລະຫັດໜ້າໄມ້ທ່ອນຢູ່ສະໜາມ II ທີ່ຂຸດຄົ້ນຈາກເຂດປ່າຜະລິດ ທີ່ໄດ້ຮັບການຢັ້ງຢືນປ່າໄມ້ ໃຫ້ປະຕິບັດຄືກັນກັບ ຂັ້ນຕອນການຂຽນເລກລະຫັດໃສ່ໜ້າໄມ້ທ່ອນ ໃນເຂດປ່າຜະລິດ ແຕ່ຕ້ອງໄດ້ຕື່ມເຄື່ອງໝາຍ "FSC" ໃສ່ໜ້າກຸ່ມທີ 1 ເບິ່ງຕາມຮູບທີ 7.




**ຮູບທີ 7:** ການຂຽນເລກລະຫັດໃສ່ໜ້າໄມ້ທ່ອນທີ່ຂຸດຄົ້ນຈາກປ່າຜະລິດ ທີ່ໄດ້ຮັບການຢັ້ງຢືນ "FSC"

### 9.3 ການຂຽນເລກລະຫັດໃສ່ໜ້າໄມ້ທ່ອນ ທີ່ຂຸດຄົ້ນຈາກເຂດຫັນປ່ຽນທີ່ດິນປ່າໄມ້ ແລະ ເຂດກໍ່ສ້າງພື້ນຖານໂຄງລ່າງ

ການຂຽນເລກລະຫັດໃສ່ໜ້າໄມ້ທ່ອນ ທີ່ຂຸດຄົ້ນຈາກເຂດຫັນປ່ຽນທີ່ດິນປ່າໄມ້ ແລະ ເຂດກໍ່ສ້າງພື້ນຖານໂຄງລ່າງ ໃນເຂດທີ່ສຳຫຼວດແລ້ວ (100%) ລວມທັງເຂດຫັນປ່ຽນທີ່ດິນປ່າໄມ້ ແລະ ເຂດກໍ່ສ້າງພື້ນຖານໂຄງລ່າງ ທີ່ໄດ້ສຳຫຼວດດ້ວຍການສຸ່ມຕອນຕົວຢ່າງ ເພື່ອປະເມີນປໍລິມາດໄມ້ ແມ່ນໃຫ້ຂຽນເລກລະຫັດໂຄງການໃສ່ໜ້າໄມ້ທ່ອນ ຊຶ່ງປະກອບມີ ສອງ ກຸ່ມ ດັ່ງນີ້:

**1) ກຸ່ມທີ 1** ແມ່ນແຫຼ່ງທີ່ມາຂອງໄມ້ທ່ອນ ຊຶ່ງຂຽນຢູ່ດ້ານເທິງຂອງໜ້າໄມ້ທ່ອນ ໂດຍມີ 5 ເລກລະຫັດ ຄື:
- ຊື່ໂຄງການ;
- ໜ່ວຍຂຸດຄົ້ນ;
- ຕອນຂຸດຄົ້ນໄມ້ (ແມ່ນຕອນທີ່ກຳນົດ ໃນເຂດແຕ່ພື້ນທີ່ຂຸດຄົ້ນ);
- ເບີຕົ້ນຕັດ ຕາມແບບພິມ 2 ຂ;
- ເລກທີທ່ອນໄມ້ (ເລກລຳດັບຂອງທ່ອນໄມ້ ໃນຕົ້ນນັ້ນໆ).

**2) ກຸ່ມທີ 2** ແມ່ນເລກກຳກັບຂອງໄມ້ທ່ອນ ຊຶ່ງຂຽນຢູ່ດ້ານລຸ່ມ ໂດຍມີ ສາມ ເລກລະຫັດ ຄື:
- ເບີທ່ອນ;
- ໜ້າຕ້າງ (ຊັງຕີແມັດ);
- ລວງຍາວ (ຊັງຕີແມັດ).

ສຳລັບວິທີການການຂຽນໜ້າໄມ້ທ່ອນ ທີ່ຂຸດຄົ້ນຈາກເຂດ ຫັນປ່ຽນທີ່ດິນປ່າໄມ້ ແລະ ເຂດກໍ່ສ້າງພື້ນຖານໂຄງລ່າງ ເບິ່ງຕາມຮູບ 8.



**ຮູບທີ 8:** ການຂຽນໜ້າໄມ້ທ່ອນ ທີ່ຂຸດຄົ້ນຈາກເຂດທັນປ່ຽນທີ່ດິນປ່າໄມ້ ແລະ ເຂດກໍ່ສ້າງພື້ນຖານໂຄງລ່າງ

**ກຸ່ມທີ 1 ແມ່ນແຫຼ່ງທີ່ມາຂອງໄມ້**

TH ໝາຍເຖິງ ຊື່ຂອງໂຄງການ (ເຂື່ອນໄຟຟ້ານ້ຳເທີນ);

**ເລກ** $s_1$ ໝາຍເຖິງ ລະຫັດ ໜ່ວຍຂຸດຄົ້ນ;

**ເລກ 6** ໝາຍເຖິງ ລະຫັດ ຕອນຂຸດຄົ້ນ;

**ເລກ 8** ໝາຍເຖິງ ເບີຕົ້ນຕັດ;

**ເລກ 1** ໝາຍເຖິງ ທ່ອນທີໜຶ່ງ.

**ກຸ່ມທີ 2 ເລກກຳກັບຂອງໄມ້ທ່ອນ**

**ເລກ 1** ໝາຍເຖິງ ເບີທ່ອນທີ ໜຶ່ງ;

**ເລກ 84** ໝາຍເຖິງ ໜ້າຕັດ;

**ເລກ 750** ໝາຍເຖິງ ລວງຍາວ.

## 10. ການມອບບັນຊີໄມ້ທ່ອນ

ພາຍຫຼັງຂະແໜງການກະສິກຳ ແລະ ປ່າໄມ້ ໄດ້ວັດແທກ, ຈັດຊັ້ນຄຸນນະພາບ ແລະ ຂຶ້ນບັນຊີໄມ້ທ່ອນແລ້ວ ຕ້ອງມອບບັນຊີໄມ້ທ່ອນ ສະໜາມ II ໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ ເພື່ອກວດກາບັນຊີໄມ້ທ່ອນ ແລະ ກວດກາໄມ້ຕົວຈິງ, ພ້ອມທັງຮັບຜິດຊອບ ປົກປັກຮັກສາໄມ້ຢູ່ສະໜາມ II ຕາມບັນຊີໄມ້ ທີ່ໄດ້ເຮັດບົດບັນທຶກມອບ-ຮັບ ຮ່ວມກັນ.

## 11. ການຈົດບັນຊີໄມ້ທ່ອນເຂົ້າເປັນຊັບສິນຂອງລັດ

ຂະແໜງການອຸດສາຫະກຳ ແລະ ການຄ້າ ເປັນຜູ້ນຳເອົາບັນຊີໄມ້ທ່ອນ ສະໜາມ II ທີ່ໄດ້ຮັບຈາກຂະແໜງການກະສິກຳ ແລະ ປ່າໄມ້ ຈົດເຂົ້າບັນຊີຊັບສິນຂອງລັດ ນຳຂະແໜງການການເງິນ ໂດຍປະຕິບັດຕາມລະບຽບການ ຂອງກະຊວງການເງິນ ວາງອອກໃນແຕ່ລະໄລຍະ.

## 12. ການປະມູນ ຊື້-ຂາຍ ໄມ້ທ່ອນ

ພາຍຫຼັງໄດ້ຈົດບັນຊີໄມ້ທ່ອນເປັນຊັບສິນຂອງລັດ ແລ້ວ, ຂະແໜງການອຸດສາຫະກຳ ແລະ ການຄ້າເປັນຜູ້ດຳເນີນການປະມູນ ຊື້-ຂາຍ ໄມ້ທ່ອນ ດ້ວຍວິທີການເປີດເຜີຍ, ກວ້າງຂວາງ, ໂປ່ງໃສ ແລະ ຍຸຕິທຳຕາມລະບຽບການຊື້ຂາຍໄມ້ ທີ່ຂະແໜງການອຸດສະຫະກຳ ແລະ ການຄ້າ ວາງອອກໃນແຕ່ລະໄລຍະ ເພື່ອຮັບປະກັນຜົນປະໂຫຍດສູງສຸດຂອງລັດ.

## 13. ການຊຳລະຄ່າພັນທະໄມ້ທ່ອນ

ຜູ້ທີ່ຊະນະການປະມູນ ຕ້ອງຊຳລະຄ່າພັນທະໄມ້ ນຳຂະແໜງການການເງິນ ຕາມມູນຄ່າຂອງສັນຍາ ຊື້-ຂາຍ ລະຫວ່າງ ຂະແໜງການອຸດສາຫະກຳ ແລະ ການຄ້າ ກັບ ຜູ້ຊະນະການປະມູນ ໃຫ້ຄົບຖ້ວນ ເພື່ອເປັນຫຼັກຖານ ໃນການຂໍອະນຸຍາດເຄື່ອນຍ້າຍ ນຳຂະແໜງການກະສິກຳ ແລະ ປ່າໄມ້.

## 14. ການລຶບລ້າງບັນຊີໄມ້ທ່ອນອອກຈາກບັນຊີຊັບສິນຂອງລັດ

ຜູ້ຊະນະການປະມູນ ທີ່ໄດ້ຊຳລະຄ່າພັນທະໄມ້ ຕາມສັນຍາ ຊື້-ຂາຍ ໄມ້ທ່ອນ ຢ່າງຄົບຖ້ວນແລ້ວ ກ່ອນຈະເຄື່ອນຍ້າຍໄມ້ທ່ອນ ອອກຈາກສະໜາມ II ຫາ ສະໜາມ III ຫຼື ໂຮງງານ, ຂະແໜງການການເງິນ ເປັນຜູ້ກວດກາຄືນບໍລິມາດໄມ້ ທີ່ໄດ້ຂຶ້ນບັນຊີເປັນຊັບສິນຂອງລັດ ສົມທຽບກັບບໍລິມາດໄມ້ ທີ່ຂາຍອອກ ເພື່ອຮັບປະກັນວ່າໄດ້ມີການຊຳລະແລ້ວ ກ່ອນລຶບລ້າງອອກຈາກບັນຊີຊັບສິນຂອງລັດ ຕາມລະບຽບການ.

**15. ການອອກໃບອະນຸຍາດເຄື່ອນຍ້າຍໄມ້ທ່ອນ ແຕ່ສະໜາມ II ຫາ ສະໜາມ III**

ໄມ້ທ່ອນທີ່ໄດ້ຜ່ານການປະມູນ ແລະ ໄດ້ຮັບການຢັ້ງຢືນຊຳລະຄ່າພັນທະໄມ້ ຈາກຂະແໜງການການເງິນ ຕາມສະໂໜດນຳສົ່ງ ຂອງພະແນກອຸດສາຫະກຳ ແລະ ການຄ້າຂັ້ນແຂວງ ຢ່າງຄົບຖ້ວນແລ້ວ, ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ເປັນຜູ້ຮັບຜິດຊອບ ໃນການອອກໃບອະນຸຍາດເຄື່ອນຍ້າຍໄມ້ ແຕ່ສະໜາມ II ຫາ ສະໜາມ III ຫຼື ໂຮງງານ ໂດຍນຳໃຊ້ ແບບພິມ 6 ແລະ ຈ້ຳຕາ **ປມ** ໃສ່ໃບອະນຸຍາດເຄື່ອນຍ້າຍ.

**16. ການເຄື່ອນຍ້າຍໄມ້ທ່ອນ ແຕ່ສະໜາມ II ຫາ ສະໜາມ III**

ພະນັກງານປ່າໄມ້ປະຈຳສະໜາມ ເປັນຜູ້ຮັບຜິດຊອບຕິດຕາມການນຳໄມ້ຂຶ້ນລົດແຕ່ລະຄັນ ແລະ ການເຄື່ອນຍ້າຍໄມ້ທ່ອນ ແຕ່ສະໜາມ II ຫາ ສະໜາມ III ຫຼື ໂຮງງານ ໃຫ້ປະຕິບັດ ດັ່ງນີ້:

- ກວດກາບັນຊີໄມ້ ທີ່ໄດ້ອອກໃບອະນຸຍາດເຄື່ອນຍ້າຍ;
- ຕິດຕາມການເອົາໄມ້ທ່ອນຂຶ້ນລົດແຕ່ລະຄັນ ພ້ອມທັງຕີຕາ **ປມ** ໃສ່ໜ້າໄມ້ທ່ອນ ແຕ່ລະທ່ອນ ຕາມລະບຽບການ;
- ຂຽນໃບນຳສົ່ງໄມ້ທ່ອນ ໃຫ້ລົດແຕ່ລະຄັນ ຕາມແບບພິມ 7, ພ້ອມທັງຈ້ຳຕາ **ປມ** ໃສ່ໃບນຳສົ່ງໄມ້ທ່ອນແຕ່ລະໃບເປັນ ສີ່ ສະບັບ ເພື່ອໃຫ້ພະນັກງານປ່າໄມ້ປະຈຳສະໜາມ, ຜູ້ຂັບລົດບັນທຸກໄມ້ທ່ອນ, ເຈົ້າຂອງໄມ້ ແລະ ເຈົ້າຂອງໂຮງງານ;
- ໄມ້ທ່ອນທີ່ເຄື່ອນຍ້າຍ ແຕ່ສະໜາມ II ຫາ ສະໜາມ III ແມ່ນເປັນຄວາມຮັບຜິດຊອບຂອງເຈົ້າຂອງໄມ້ ຫຼື ເຈົ້າຂອງໂຮງງານປຸງແຕ່ງໄມ້. ສຳລັບການຄຸ້ມຄອງ ແລະ ຕິດຕາມໄມ້ ສົ້ນເຂົ້າ-ສົ້ນອອກ ໃນຂະບວນການປຸງແຕ່ງ ແລະ ການຄ້າ ແມ່ນຄວາມຮັບຜິດຊອບຂອງຂະແໜງການອຸດສາຫະກຳ ແລະ ການຄ້າ.

## III. ການເກັບຮັກສາເອກະສານ

ບັນດາເອກະສານທີ່ກ່ຽວຂ້ອງກັບໄມ້ທ່ອນ ທີ່ຂຸດຄົ້ນ ແລະ ເຄື່ອນຍ້າຍມາຈາກ ເຂດປ່າຜະລິດ, ເຂດປ່າຜະລິດທີ່ໄດ້ຮັບການຢັ້ງຢືນ FSC, ເຂດຫັນປ່ຽນທີ່ດິນປ່າໄມ້ ແລະ ເຂດກໍ່ສ້າງພື້ນຖານໂຄງລ່າງ ຕ້ອງເກັບຮັກສາ ຢ່າງໜ້ອຍ ຫ້າ ປີ ເພື່ອຮັບປະກັນການຕິດຕາມກວດກາ ແຫຼ່ງທີ່ມາຂອງໄມ້ ແລະ ການເຄື່ອນຍ້າຍໄມ້ ຕາມຂອບເຂດຄວາມຮັບຜິດຊອບຂອງແຕ່ລະພາກສ່ວນ ດັ່ງນີ້:

**1. ບັນດາເອກະສານກ່ຽວກັບແຫຼ່ງທີ່ມາຂອງໄມ້ທ່ອນ ທີ່ຂຸດຄົ້ນ ແລະ ເຄື່ອນຍ້າຍ ອອກຈາກເຂດປ່າຜະລິດ ແລະ ເຂດປ່າຜະລິດທີ່ໄດ້ຮັບການຢັ້ງຢືນ FSC.**

| ລ/ດ | ບັນດາເອກະສານ | ກົມປ່າໄມ້ (ພະແນກຄຸ້ມຄອງປ່າຜະລິດ) | ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ (ຂະແໜງນຳເຂົ້າ ແລະ ສົ່ງອອກ) | ພະແນກ ການເງິນ ແຂວງ (ຂະແໜງ ຄຸ້ມຄອງຊັບສິນຂອງລັດ) | ພະແນກກະສິກຳ ແລະ ປ່າໄມ້ແຂວງ (ຂະແໜງປ່າໄມ້) | ຫ້ອງການກະສິກຳແລະ ປ່າໄມ້ເມືອງ (ໜ່ວຍງານປ່າໄມ້) | ອົງການປົກຄອງບ້ານ (ຈຸງານປ່າໄມ້ບ້ານ) |
|---|---|---|---|---|---|---|---|
| 1 | ແຜນຈັດສັນປ່າຜະລິດ | ຕົ້ນສະບັບ | | | ຕົ້ນສະບັບ | ຕົ້ນສະບັບ | |
| 2 | ບົດລາຍງານ ການສຳຫຼວດກ່ອນການຂຸດຄົ້ນໄມ້ | ຕົ້ນສະບັບ | | | ຕົ້ນສະບັບ | ຕົ້ນສະບັບ | ສຳເນົາ |
| 3 | ໃບອະນຸຍາດຂຸດຄົ້ນປະຈຳປີ | ຕົ້ນສະບັບ | ສຳເນົາ | | ຕົ້ນສະບັບ | ສຳເນົາ | |
| 4 | ບັນຊີໄມ້ຢືນຕົ້ນທີ່ໄດ້ຄັດເລືອກຕັດ | ຕົ້ນສະບັບ | ສຳເນົາ | | ຕົ້ນສະບັບ | ສຳເນົາ | |
| 5 | ແຜນຂຸດຄົ້ນໄມ້ປະຈຳປີ ທີ່ໄດ້ຮັບອະນຸຍາດຈາກລັດຖະບານ | ຕົ້ນສະບັບ | | | ຕົ້ນສະບັບ | ຕົ້ນສະບັບ | |
| 5 | ໃບອະນຸຍາດຂຸດຄົ້ນປະຈຳປີ | ຕົ້ນສະບັບ | | | ຕົ້ນສະບັບ | ຕົ້ນສະບັບ | ສຳເນົາ |

| | | | | | | | |
|---|---|---|---|---|---|---|---|
| 6 | ສັນຍາຂຸດຄົ້ນໄມ້ | | | | ຕົ້ນສະບັບ | ສຳເນົາ | ສຳເນົາ |
| 7 | ໃບນຳສົ່ງໄມ້ທ່ອນຈາກສະໜາມ I ຫາ ສະໜາມ II | | | | ຕົ້ນສະບັບ | ຕົ້ນສະບັບ | ສຳເນົາ |
| 8 | ບັນຊີສັງລວມໄມ້ທ່ອນ ເຂົ້າສະໜາມ II | | | | ຕົ້ນສະບັບ | ສຳເນົາ | ສຳເນົາ |
| 9 | ບັນຊີວັດແທກ ແລະ ຈັດຊັ້ນຄຸນນະພາບໄມ້ ສະໜາມ II | | ຕົ້ນສະບັບ | ຕົ້ນສະບັບ | ຕົ້ນສະບັບ | ສຳເນົາ | |
| 10 | ສັນຍາຊື້-ຂາຍໄມ້ທ່ອນ | | ຕົ້ນສະບັບ | ຕົ້ນສະບັບ | ສຳເນົາ | ສຳເນົາ | ສຳເນົາ |
| 11 | ໃບແຈ້ງລາຄາພັນທະໄມ້ | | ຕົ້ນສະບັບ | ຕົ້ນສະບັບ | ສຳເນົາ | | |
| 12 | ໃບຢັ້ງຢືນການຈົດເຂົ້າບັນຊີເປັນຊັບສິນຂອງລັດ | | ຕົ້ນສະບັບ | ຕົ້ນສະບັບ | ຕົ້ນສະບັບ | | |
| 13 | ໃບຮັບເງິນຄ່າພັນທະການຂາຍໄມ້ທ່ອນ | | ສຳເນົາ | ຕົ້ນສະບັບ | ສຳເນົາ | | |
| 14 | ໃບລຶບລ້າງບັນຊີໄມ້ອອກຈາກບັນຊີຊັບສິນຂອງລັດ | | ສຳເນົາ | ຕົ້ນສະບັບ | ສຳເນົາ | | |
| 15 | ໃບອະນຸຍາດເຄື່ອນຍ້າຍໄມ້ທ່ອນຈາກສະໜາມ II ຫາ ສະໜາມ III | ຕົ້ນສະບັບ | | | ຕົ້ນສະບັບ | ຕົ້ນສະບັບ | |
| 16 | ໃບນຳສົ່ງໄມ້ທ່ອນ ແຕ່ລະຄັນລົດຈາກສະໜາມ II ຫາ ສະໜາມ III | | | | ຕົ້ນສະບັບ | | |
| 17 | ບົດລາຍງານປະເມີນຫຼັງການຂຸດຄົ້ນໄມ້ | ສຳເນົາ | | | ຕົ້ນສະບັບ | ຕົ້ນສະບັບ | |
| 18 | ບົດສະຫຼຸບ ການປະມູນຂາຍໄມ້ປະຈຳປີ ຂອງຂະແໜງການອຸດສາຫະກຳ ແລະ ການຄ້າ | ສຳເນົາ | ຕົ້ນສະບັບ | ຕົ້ນສະບັບ | ຕົ້ນສະບັບ | ສຳເນົາ | |
| 19 | ບົດສະຫຼຸບລາຍງານ ຜົນການຈັດຕັ້ງປະຕິບັດ ແຜນການຂຸດຄົ້ນໄມ້ປະຈຳປີ | ຕົ້ນສະບັບ | | | ຕົ້ນສະບັບ | ສຳເນົາ | |

**2. ບັນດາເອກະສານກ່ຽວກັບແຫຼ່ງທີ່ມາຂອງໄມ້ທ່ອນ ທີ່ຂຸດຄົ້ນໄມ້ ແລະ ເຄື່ອນຍ້າຍ ອອກຈາກເຂດທັບປ່ຽນທີ່ດິນປ່າໄມ້ ແລະ ເຂດກໍ່ສ້າງພື້ນຖານໂຄງລ່າງ ປະກອບມີ ຄື:**

| ລ/ດ | ບັນດາເອກະສານ | ກົມປ່າໄມ້ (ພະແນກຄຸ້ມຄອງປ່າຜະລິດ) | ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ (ຂະແໜງນຳເຂົ້າ ແລະ ສົ່ງອອກ) | ພະແນກ ການເງິນ ແຂວງ (ຂະແໜງ ຄຸ້ມຄອງຊັບສິນຂອງລັດ) | ພະແນກກະສິກຳ ແລະ ປ່າໄມ້ ແຂວງ (ຂະແໜງປ່າໄມ້) | ຫ້ອງການກະສິກຳແລະ ປ່າໄມ້ ເມືອງ (ໜ່ວຍງານປ່າໄມ້) |
|---|---|---|---|---|---|---|
| 1 | ໃບອະນຸຍາດດຳເນີນການກໍ່ສ້າງ | ສຳເນົາ | ສຳເນົາ | ສຳເນົາ | ສຳເນົາ | ສຳເນົາ |
| 2 | ບົດລາຍງານ ຜົນການສຳຫຼວດປະເມີນ ບໍລິມາດໄມ້ ຫຼື ບັນຊີໄມ້ຢືນຕົ້ນ (ກໍລະນີສຳຫຼວດ 100%) | ຕົ້ນສະບັບ | | | ຕົ້ນສະບັບ | ຕົ້ນສະບັບ |
| 3 | ແຜນການຂຸດຄົ້ນໄມ້ ທີ່ລັດຖະບານອະນຸຍາດ | ຕົ້ນສະບັບ | | | ຕົ້ນສະບັບ | ຕົ້ນສະບັບ |
| 4 | ໃບອະນຸຍາດຂຸດຄົ້ນໄມ້ | ຕົ້ນສະບັບ | | | ຕົ້ນສະບັບ | ສຳເນົາ |
| 5 | ບັນຊີໄມ້ຢືນຕົ້ນທີ່ຖືກຕັດ | ຕົ້ນສະບັບ | | | ຕົ້ນສະບັບ | ສຳເນົາ |
| 6 | ສັນຍາຂຸດຄົ້ນໄມ້ | ຕົ້ນສະບັບ | | | ຕົ້ນສະບັບ | ຕົ້ນສະບັບ |

| | | | | | | |
|---|---|---|---|---|---|---|
| 7 | ໃບນຳສົ່ງໄມ້ທ່ອນ ແຕ່ສະໜາມ I ຫາ ສະໜາມ II | | | | ຕົ້ນສະບັບ | ສຳເນົາ |
| 8 | ບັນຊີສັງລວມໄມ້ທ່ອນເຂົ້າສະໜາມ II | | | | ສຳເນົາ | ຕົ້ນສະບັບ |
| 9 | ບັນຊີວັດແທກ ແລະ ຈັດຊັ້ນຄຸນນະພາບໄມ້ທ່ອນ ສະໜາມ II | | | | ຕົ້ນສະບັບ | ຕົ້ນສະບັບ |
| 10 | ສັນຍາຊື້-ຂາຍໄມ້ທ່ອນ | | | | ຕົ້ນສະບັບ | ສຳເນົາ |
| 11 | ໃບແຈ້ງລາຄາພັນທະໄມ້ | | ຕົ້ນສະບັບ | ຕົ້ນສະບັບ | ຕົ້ນສະບັບ | ສຳເນົາ |
| 12 | ໃບຢັ້ງຢືນການຈົດເຂົ້າບັນຊີເປັນຊັບສິນຂອງລັດ | | ຕົ້ນສະບັບ | ຕົ້ນສະບັບ | ຕົ້ນສະບັບ | ຕົ້ນສະບັບ |
| 13 | ໃບຮັບເງິນຄ່າພັນທະການຂາຍໄມ້ທ່ອນ ຂອງຂະແໜງການ ການເງິນ | | ຕົ້ນສະບັບ | ຕົ້ນສະບັບ | ສຳເນົາ | |
| 14 | ໃບລົບລ້າງບັນຊີໄມ້ອອກຈາກບັນຊີຊັບສິນຂອງລັດ | | ຕົ້ນສະບັບ | ຕົ້ນສະບັບ | ຕົ້ນສະບັບ | |
| 15 | ໃບອະນຸຍາດເຄື່ອນຍ້າຍໄມ້ທ່ອນ ແຕ່ສະໜາມ II ຫາ ສະໜາມ III | | ສຳເນົາ | ຕົ້ນສະບັບ | ສຳເນົາ | |
| 16 | ໃບນຳສົ່ງໄມ້ທ່ອນແຕ່ລະຄັນລົດ ແຕ່ສະໜາມ II ຫາ ສະໜາມ III | | ສຳເນົາ | ຕົ້ນສະບັບ | ສຳເນົາ | |
| 17 | ບົດສະຫຼຸບ ການປະມູນຂາຍໄມ້ປະຈຳປີ ຂອງຂະແໜງການອຸດສາຫະກຳ ແລະ ການຄ້າ | ຕົ້ນສະບັບ | | | ຕົ້ນສະບັບ | ຕົ້ນສະບັບ |
| 18 | ບົດສະຫຼຸບ ລາຍງານຜົນການຈັດຕັ້ງປະຕິບັດແຜນການຂຸດຄົ້ນໄມ້ປະຈຳປີ | ຕົ້ນສະບັບ | | ຕົ້ນສະບັບ | ສຳເນົາ | |

## IV. ມາດຕະການ ແລະ ວິທີການຈັດຕັ້ງປະຕິບັດ

1. ກົມປ່າໄມ້ ແລະ ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ເປັນເຈົ້າການສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໂຄສະນາເຜີຍແຜ່, ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ໃຫ້ໄດ້ຮັບຜົນດີ;
2. ໃຫ້ ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ຊີ້ນຳ ແລະ ຊຸກຍູ້ຂະແໜງປ່າໄມ້ ໃນການຄຸ້ມຄອງ ການເຄື່ອນຍ້າຍໄມ້ທ່ອນ ຈາກເຂດປ່າຜະລິດ, ເຂດຫັນປ່ຽນທີ່ດິນປ່າໄມ້ ແລະ ເຂດກໍ່ສ້າງພື້ນຖານໂຄງລ່າງ ແຕ່ສະໜາມ I ຫາ ສະໜາມ II ແລະ ສະໜາມ III;
3. ໃນການຈັດຕັ້ງປະຕິບັດຕົວຈິງ ມີຂໍ້ສະດວກ, ຫຍຸ້ງຍາກແນວໃດ ໃຫ້ລາຍງານກະຊວງກະສິກຳ ແລະ ປ່າໄມ້ ຕາມຂັ້ນຕອນ ເພື່ອພິຈາລະນາ ແກ້ໄຂຢ່າງທັນການ.

ຄຳແນະນຳສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງລົງຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

**ລັດຖະມົນຕີ**

ເພັດ ພົມພິພັກ

**ແບບພິມ 1**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ປ່າໄມ້
ພະແນກກະສິກຳ ແລະ ປ່າໄມ້ ເລກທີ......................./.........

........................., ວັນທີ...............................

# ໃບອະນຸຍາດຂຸດຄົ້ນໄມ້

- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ແຜນການຂຸດຄົ້ນໄມ້ ແລະ ເຄື່ອງປ່າຂອງດົງປະຈຳປີ...........ພະແນກກະສິກຳ ແລະ ປ່າໄມແຂວງ/ນະຄອນຫຼວງ, ເລກທີ.........../......, ລົງວັນທີ.....................;
- ອີງຕາມ ຂໍ້ຕົກລົງ ຂອງເຈົ້າແຂວງ............. ເລກທີ............/ຈຂ, ລົງວັນທີ.................. ກ່ຽວກັບແຜນແບ່ງປັນຕົວເລກ ແຜນການຂຸດຄົ້ນໄມ້ ໃຫ້ໜ່ວຍສະເພາະກິດ (ໂຮງງານປຸງແຕ່ງໄມ້);
- ອີງຕາມ ໃບຄຳຮ້ອງຂອງ................ ເລກທີ................/....., ລົງວັນທີ......................

## ພະແນກກະສິກຳ ແລະ ປ່າໄມ້ ແຂວງ...........................

1. ອະນຸຍາດໃຫ້ແກ່.........................................................................................................
   ດຳເນີນການຂຸດຄົ້ນໄມ້ຢູ່ເຂດ............................ບ້ານ.......................ເມືອງ........................
   ແຂວງ..................................ເນື້ອທີ່ທັງໝົດ.....................................ຊື່ປະເພດຊະນິດ ແລະ ຈຳນວນຕົ້ນໄມ້ ຕາມການສຳຫຼວດໝາຍຕົ້ນຕັດ ເລກທີ............./....., ລົງວັນທີ................ ໄດ້ສັງລວມ ດັ່ງນີ້:
   - **ໄມ້ບັນຊີ I ຈຳນວນຕົ້ນ....................ບໍລິມາດ.................................. ມ$^3$**
   - **ໄມ້ບັນຊີ II ຈຳນວນຕົ້ນ....................ບໍລິມາດ.................................. ມ$^3$**
   - **ໄມ້ບັນຊີ II ຈຳນວນຕົ້ນ....................ບໍລິມາດ.................................. ມ$^3$**

   **ລວມທັງໝົດ (ຕົ້ນ)..........................ບໍລິມາດທັງໝົດ......................... ມ$^3$**

2. ມອບໃຫ້ຂະແໜງປ່າໄມ້, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ແລະ ບ້ານ ເປັນຜູ້ຄຸ້ມຄອງ, ຕິດຕາມ ແລະ ກວດກາ ໃຫ້ຖືກຕ້ອງຕາມລະບຽບຫຼັກການ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ຢ່າງເຂັ້ມງວດ;
3. ຫ້າມ ເກັບກູ້, ຂຸດຄົ້ນໄມ້ ຫຼື ອະນຸຍາດ ເກີນຈຳນວນທີ່ລະບຸໄວ້ໃນ ໃບອະນຸຍາດສະບັບນີ້;
4. ຫ້າມຊື້-ຂາຍ ຫຼືໃຫ້ບຸກຄົນອື່ນ ນຳໃຊ້ໃບອະນຸຍາດສະບັບນີ້ ຢ່າງເດັດຂາດ;
5. ທຸກຮູບການ ທີ່ເຫັນວ່າເປັນການລະເມີດ ແລະ ບໍ່ປະຕິບັດຕາມລະບຽບກົດໝາຍ ກ່ຽວກັບ ການຄຸ້ມຄອງປ່າໄມ້ ຈະຖືກສັ່ງໃຫ້ຢຸດເຊົາ ແລະ ປັບໃໝ ຕາມແຕ່ລະກໍລະນີ;

6. ທຸກພາກສ່ວນທີ່ໄດ້ຮັບການຂຸດຄົ້ນໄມ້ ແລະ ມີໄມ້ທ່ອນໄວ້ໃນຄອບຄອງ ຕ້ອງໃຫ້ຄວາມຮ່ວມມື ແລະ ອໍານວຍຄວາມສະດວກ ແກ່ພະນັກງານປ່າໄມ້ ໃນການຈັດຕັ້ງປະຕິບັດໜ້າທີ່ ຕິດຕາມ ແລະ ກວດກາ;
7. ໃບອະນຸຍາດຂຸດຄົ້ນໄມ້ສະບັບນີ້ ມີອາຍຸການນໍາໃຊ້ ແຕ່ວັນທີ......................ເຖິງວັນທີ.......................

**ພະແນກກະສິກໍາ ແລະ ປ່າໄມ້ ແຂວງ**

**ບ່ອນນໍາສົ່ງ:**

1. ກົມປ່າໄມ້ 01 ສະບັບ (ໃຊ້ຕາງລາຍງານ);
2. ຂະແໜງປ່າໄມ້ 01 ສະບັບ (ເພື່ອຕິດຕາມ);
3. ໜ່ວຍງານປ່າໄມ້ເມືອງ 01 ສະບັບ (ເພື່ອຕິດຕາມ);
4. ເຈົ້າຂອງໃບອະນຸຍາດ 01 ສະບັບ (ເພື່ອປະຕິບັດ);
5. ເກັບຮັກສາໄວ້ 01 ສະບັບ.

ແບບພິມ 2 ກ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ບັນຊີໄມ້ຢືນຕົ້ນທີ່ຄັດເລືອກຕັດໃນເຂດປ່າຜະລິດ

| | | | |
|---|---|---|---|
| ປີວາງແຜນຈັດສັນ | | ເຂດຄຸ້ມຄອງຍ່ອຍ | |
| ເຂດປ່າຜະລິດ | | FSC (ແມ່ນ/ບໍ່ແມ່ນ) | |
| ເຂດຄຸ້ມຄອງ | | | |

| | |
|---|---|
| ວັນທີ | |
| ຜູ້ຮັບເໝົາຂຸດຄົ້ນ | |

| ລ/ດ | ຄຸ້ມຂຸດຄົ້ນ | ແລວແມ່ | ແລວປີກ | ເລກທີ ສຂລ | ເບີຕົ້ນຕັດ | ທ່ອນທີ | ຊື່ຊະນິດພັນໄມ້ ພາສາລາວ | ລະຫັດ ຊະນິດ ພັນໄມ້ | ລວງຍາວ (ມ]) | ໜ້າຕ້າງ ສລ D1 [(ຊມ]) | ໜ້າຕ້າງ ສລ D2 ([ຊມ)] | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|---|
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |

ພະນັກງານຄຸ້ມຄອງພາກສະໜາມ | ຜູ້ຕັດປ້ຳ

ແບບພິມ 2 ຂ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ບັນຊີໄມ້ຢືນຕົ້ນທີ່ຄັດເລືອກຕັດໃນເຂດຫັນປ່ຽນທີ່ດິນປ່າໄມ້ ແລະ ເຂດກໍ່ສ້າງພື້ນຖານໂຄງລ່າງ

| ຊື່ໂຄງການ: | | | | | ລະຫັດໜ່ວຍຂຸດຄົ້ນ: | | | ວັນທີ: | |
|---|---|---|---|---|---|---|---|---|---|
| ລ/ດ | ຄຸ້ມຂຸດຄົ້ນ | ເບີຕົ້ນ | ທ່ອນທີ | ຊື່ຊະນິດພັນໄມ້ ພາສາລາວ | ໜ້າຕັດ ສລ D1 (ຊມ) | ໜ້າຕັດ ສລ D2 (ຊມ) | ໜ້າຕັດ ສລ D1+D2 (ຊມ) | ລວງຍາວ(ມ) | ໝາຍເຫດ |
| | | | | | | | | | |
| | | | | | | | | | |
| | | | | | | | | | |
| | | | | | | | | | |
| | | | | | | | | | |
| | | | | | | | | | |
| | | | | | | | | | |
| | | | | | | | | | |
| | | | | | | | | | |
| | | | | | | | | | |
| | | | | | | | | | |
| | | | | | | | | | |

ພະນັກງານຄຸ້ມຄອງພາກສະໜາມ |

ຜູ້ຕັດປ້ຳ

ແບບພິມ 3 ກ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ໃບນຳສົ່ງໄມ້ ແຕ່ສະໜາມ I ຫາ ສະໜາມ II ໃນເຂດປ່າຜະລິດ

| | | | | | | | |
|---|---|---|---|---|---|---|---|
| ປີວາງແຜນຈັດສັນ | | ເຂດຄຸ້ມຄອງຍ່ອຍ | | ຊື່ສະໜາມ I | | ວັນທີ | |
| ເຂດປ່າຜະລິດ | | FSC (ແມ່ນ/ບໍ່ແມ່ນ) | | ຊື່ສະໜາມ II | | ໃບທີ | |
| ເຂດຄຸ້ມຄອງ | | | | | | ຜູ້ຮັບເໝົາຂຸດຄົ້ນ | |
| | | | | | | ທະບຽນລົດບັນທຸກ | |

| ລ/ດ | ຄຸ້ມຂຸດຄົ້ນ | ແລວແມ່ | ແລວປີກ | ເລກທີ ສຂຂ | ເປີຕົ້ນຕັດ | ທ່ອນທີ | ຊື່ຊະນິດພັນໄມ້ ພາສາລາວ | ລະຫັດຊະນິດພັນໄມ້ | ລວງຍາວ (ມ) | ໜ້າຕ້າງ ສລ D1 (ຊມ) | ໜ້າຕ້າງ ສລ D2 (ຊມ) | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|---|
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |

ພະນັກງານຄຸ້ມຄອງການຕັດ

ຜູ້ຂັບລົດບັນທຸກ

ພະນັກງານປະຈຳສະໜາມ II

ແບບພິມ 3 ຂ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ໃບນຳສົ່ງໄມ້ ແຕ່ສະໜາມ I ຫາ ສະໜາມ II ໃນເຂດຫັນປ່ຽນທີ່ດິນ ແລະ ເຂດກໍ່ສ້າງພື້ນຖານໂຄງລ່າງ

| ຊື່ໂຄງການ: | ຊື່ສະໜາມ 1: | ວັນທີ: |
|---|---|---|
| | ຊື່ສະໜາມ 2: | ໃບທີ: |
| | | ທະບຽນລົດບັນທຸກ: |

| ລ/ດ | ລະຫັດໜ່ວຍ ຊຸດຄົ້ນ | ຄຸ້ມ ຊຸດຄົ້ນ | ເບີຕົ້ນ | ທ່ອນທີ | ຊະນິດພັນໄມ້ ພາສາ ລາວ | ລະຫັດຊະນິດພັນ ໄມ້ | ໜ້າຕັດ ສລ D1 (ຊມ) | ໜ້າຕັດ ສລ D2 (ຊມ) | ໜ້າຕັດ ສລ D1+D2 (ຊມ) | ລວງຍາວ (ມ) | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|
| | | | | | | | | | | | |
| | | | | | | | | | | | |
| | | | | | | | | | | | |
| | | | | | | | | | | | |
| | | | | | | | | | | | |
| | | | | | | | | | | | |
| | | | | | | | | | | | |
| | | | | | | | | | | | |
| | | | | | | | | | | | |
| | | | | | | | | | | | |

ພະນັກງານຄຸ້ມຄອງ ສະໜາມ II　　　　ຜູ້ຂັບລົດບັນທຸກ　　　　ພະນັກງານຜູ້ຮັບໄມ້ ສະໜາມ I

ແບບພິມ 4 ກ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ບັນຊີໄມ້ເຂົ້າສະໜາມ II ໃນເຂດປ່າຜະລິດ

| FMY | | ຊື່ສະໜາມ II | | ວັນທີ | |
|---|---|---|---|---|---|

| | |
|---|---|
| ລວມຍອດບໍລິມາດໄມ້ເຂົ້າ | |
| ລວມຍອດບໍລິມາດໄມ້ເຂົ້າ FSC | |
| ບໍລິມາດໄມ້ທີ່ໄດ້ຈັດຊັ້ນຄຸນນະພາບ | |
| ບໍລິມາດໄມ້ FSC ບໍ່ທັນໄດ້ຈັດຊັ້ນຄຸນນະພາບ | |

| ລ/ດ | ເຂດປ່າ ຜະລິດ | ເຂດຄຸ້ມ ຄອງ | ເຂດຄຸ້ມ ຄອງຍ່ອຍ | ຄຸ້ມ | ເລວແມ່ | ເລວປີກ | ເລກທີ ສຂຄ | ເບີຕົ້ນ | ທ່ອນທີ | ຊື່ຊະນິດ ພັນໄມ້ ພາສາລາວ | ລະຫັດ ຊະນິດ ພັນໄມ້ | ລວງຍາວ (ມ) | ໜ້າຕັດ ສລD1 ([ຊມ)] | ໜ້າຕັດ ສລD2 [(ຊມ)] | ບໍລິມາດ ($ມ^3$) | FSC (ແມ່ນ/ ບໍ່ແມ່ນ) | ວັນທີໄມ້ ເຂົ້າ | ທະບຽນ ລົດບັນທຸກ | ຜູ້ຮັບ ເໝົາ ຂຸດຄົ້ນ | ຊັ້ນຄຸນ ນະພາບ | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| | | | | | | | | | | | | | | | | | | | | | |
| | | | | | | | | | | | | | | | | | | | | | |
| | | | | | | | | | | | | | | | | | | | | | |
| | | | | | | | | | | | | | | | | | | | | | |
| | | | | | | | | | | | | | | | | | | | | | |

ພະນັກງານ ສັງລວມຂໍ້ມູນ ສະໜາມ II

ແບບພິມ 4 ຂ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ບັນຊີໄມ້ເຂົ້າສະໜາມ II ໃນເຂດຫັນປ່ຽນທີ່ດິນປ່າໄມ້ ແລະ ເຂດກໍ່ສ້າງພື້ນຖານໂຄງລ່າງ

| ຊື່ໂຄງການ: | | | | | | | ບໍລິມາດລວມທີ່ໄດ້ຮັບເຂົ້າ: | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|---|---|
| ຊື່ສະໜາມ II : | | | | | | | ບໍລິມາດລວມທີ່ບໍ່ທັນໄດ້ຈັດຊັ້ນຄຸນນະພາບ: | | | | | | | | |
| ລ/ດ | ລະຫັດໜ່ວຍ ຊຸດຄົ້ນ | ຄຸ້ມ ຊຸດຄົ້ນ | ເບີຕົ້ນ | ທ່ອນທີ | ຊື່ຊະນິດພັນໄມ້ ພາສາລາວ | ລະຫັດຊະນິດ ພັນໄມ້ | ໜ້າຕັດ ສລ D1 (ຊມ) | ໜ້າຕັດ ສລ D2 (ຊມ) | ໜ້າຕັດ ສລ D1 +D2 (ຊມ) | ລວງຍາວ (ຊມ) | ບໍລິມາດ (ມ3) | ວັນທີ່ຮັບ ໄມ້ເຂົ້າ | ທະບຽນລົດ ບັນທຸກ | ເບີທ່ອນ ຈັດຊັ້ນຄຸນະ ພາບໄມ້ | ໝາຍເຫດ |
| | | | | | | | | | | | | | | | |
| | | | | | | | | | | | | | | | |
| | | | | | | | | | | | | | | | |
| | | | | | | | | | | | | | | | |
| | | | | | | | | | | | | | | | |
| | | | | | | | | | | | | | | | |
| | | | | | | | | | | | | | | | |
| | | | | | | | | | | | | | | | |
| | | | | | | | | | | | | | | | |
| | | | | | | | | | | | | | | | |

ພະນັກງານສັງລວມຂໍ້ມູນ ສະໜາມ II

ແບບພິມ 5 ກ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ບັນຊີຈັດຊັ້ນຄຸນນະພາບໄມ້ທ່ອນ ສະໜາມ II ໃນເຂດປ່າຜະລິດ

| FMY | |
|---|---|

| ຊື່ສະໜາມ II | |
|---|---|

| ລວມຍອດຈຳນວນໄມ້ທ່ອນ | |
|---|---|
| ລວມຍອດຈຳນວນໄມ້ທ່ອນ (FSC) | |

| ລວມຍອດບໍລິມາດໄມ້ (cbm) | |
|---|---|
| ລວມຍອດບໍລິມາດໄມ້FSC(cbm) | |

| ລ/ດ | ເຂດປ່າ ຜະລິດ | ເຂດຄຸ້ມ ຄອງ | ເຂດຄຸ້ມ ຄອງ ຍ່ອຍ | ຄຸ້ມຂຸດ ຄົ້ນ | ແລວ ແມ່ | ແລວ ປີກ | ເລກທີ ສຂຄ | ເບີ ຕົ້ນ | ທ່ອນທີ | ເລກທີ ຈຊບພ | ເລກທີແບບ ຟອມ ຈຊບພ | ຊື່ຊະນິດພັນ ໄມ້ ພາສາລາວ | ລະຫັດ ຊະນິດ ພັນໄມ້ | ຊື່ວິທະ ຍາສາດ | ລວງຍາວ (ມ) | ໜາດ D [(ຊມ)] | ບໍລິມາດ (ມ³) | ຊຸດພ ກ/ຂ/ຄ | FSC(ແມ່ນ/ ບໍ່ແມ່ນ) | ຜູ້ຮັບ ເໝົາ ຂຸດຄົ້ນ | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| | | | | | | | | | | | | | | | | | | | | | |
| | | | | | | | | | | | | | | | | | | | | | |
| | | | | | | | | | | | | | | | | | | | | | |
| | | | | | | | | | | | | | | | | | | | | | |
| | | | | | | | | | | | | | | | | | | | | | |
| | | | | | | | | | | | | | | | | | | | | | |
| | | | | | | | | | | | | | | | | | | | | | |
| | | | | | | | | | | | | | | | | | | | | | |
| | | | | | | | | | | | | | | | | | | | | | |

ພະນັກງານຂະແໜງປ່າໄມ້ແຂວງ

ພະນັກງານຫ້ອງການ ກປ ເມືອງ

ພະນັກງານ
ວັດແທກ ແລະ ຈັດຊັ້ນຄຸນນະພາບໄມ້ທ່ອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ບັນຊີຈັດຊັ້ນຄຸນນະພາບໄມ້ທ່ອນ ສະໜາມ II ໃນເຂດຫັນປ່ຽນທີ່ດິນປ່າໄມ້ ແລະ ເຂດກໍ່ສ້າງພື້ນຖານໂຄງລ່າງ

| ຊື່ໂຄງການ: | ຈຳນວນໄມ້ທ່ອນທັງໝົດ: | ລວມຍອດບໍລິມາດໄມ້ (ມ3): |
|---|---|---|
| ບັນຊີໄມ້ເລກທີ: | | |

| ລ/ດ | ເບີທ່ອນ | ຊື່ຊະນິດພັນໄມ້ ພາສາລາວ | ລະຫັດ ຊະນິດພັນໄມ້ | ຊື່ວິທະຍາສາດ | CITES (ແມ່ນ/ບໍ່ແມ່ນ) | ໜ້າຕ້າງ (ຊມ) | ລວງຍາວ (ມ) | ບໍລິມາດ (ມ3) | ປະເພດ ກ/ຂ/ຄ | ໝາຍເຫດ |
|---|---|---|---|---|---|---|---|---|---|---|
| | | | | | | | | | | |
| | | | | | | | | | | |
| | | | | | | | | | | |
| | | | | | | | | | | |
| | | | | | | | | | | |
| | | | | | | | | | | |
| | | | | | | | | | | |
| | | | | | | | | | | |
| | | | | | | | | | | |
| | | | | | | | | | | |
| | | | | | | | | | | |

ພະນັກງານຂະແໜງປ່າໄມ້ແຂວງ

ພະນັກງານຫ້ອງການ ກປ ເມືອງ

ພະນັກງານ
ວັດແທກ ແລະ ຈັດຊັ້ນຄຸນນະພາບໄມ້ທ່ອນ

ແບບພິມ 6

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ປ່າໄມ້

ພະແນກກະສິກຳ ແລະ ປ່າໄມ້ ເລກທີ............/........

................,ວັນທີ.....................

# ໃບອະນຸຍາດ ເຄື່ອນຍ້າຍໄມ້ ພາຍໃນ

- ອີງຕາມ ໃບອະນຸຍາດຂຸດຄົ້ນໄມ້ ຂອງພະແນກກະສິກຳ ແລະ ປ່າໄມ້ ເລກທີ......../...., ລົງວັນທີ.............;
- ອີງຕາມ ບັນຊີ ການຈັດຊັ້ນຄຸນນະພາບໄມ້ທ່ອນ, ໄມ້ເລື່ອຍ ແລະ ຜະລິດຕະພັນໄມ້ ເລກທີ........./....., ລົງວັນທີ.................................;
- ອີງຕາມ ໃບສະເໜີຂອງ ................... ເລກທີ.........../......., ລົງວັນທີ...............................;
- ອີງຕາມ ບົດບັນທຶກ ກວດກາໄມ້ຕົວຈິງ ຂອງວິຊາການ ເລກທີ........../......, ລົງວັນທີ....................ຂະແໜງປ່າໄມ້ແຂວງ........................

ພະແນກກະສິກຳ ແລະ ປ່າໄມ້ ແຂວງ.................ອອກໃບເຄື່ອນຍ້າຍໄມ້ສະບັບນີ້ອອກໃຫ້....................

ເພື່ອເຄື່ອນຍ້າຍໄມ້ຈາກບ້ານ/ໂຮງງານ...........................................................................................

ເມືອງ.......................... ແຂວງ...............................ເຖິງ ບ້ານ/ໂຮງງານ...................................

ເມືອງ......................... ແຂວງ............................ຈຳນວນ ບໍລິມາດ ຫຼື ນ້ຳໜັກ........................

ແມັດກ້ອນ ຫຼື ໂຕນ ດັ່ງລາຍລະອຽດ ລຸ່ມນີ້:

| ລ/ດ | ປະເພດໄມ້ | ຈຳນວນ | ບໍລິມາດ (ແມັດກ້ອນ) ຫຼື ນ້ຳໜັກ (ໂຕນ) | ຮອຍກາຄ້ອນ | ໝາຍເຫດ |
|---|---|---|---|---|---|
| | | | | | |
| | | | | | |
| | | | | | |
| | | | | | |

1. ໃບເຄື່ອນຍ້າຍໄມ້ ສະບັບນີ້ ໃຊ້ໄດ້ແຕ່ວັນທີ.........................ເຖິງວັນທີ.............................;
2. ຫ້າມບໍ່ໃຫ້ເຄື່ອນຍ້າຍໄມ້ ແຕ່ເວລາ 18:00 ໂມງ ຫາ 6:00 ໂມງ;
3. ໃນເວລາ ເຄື່ອນຍ້າຍໄມ້ຕົວຈິງ ຕ້ອງຖືເອົາໃບອະນຸຍາດສະບັບນີ້ ໄປພ້ອມທຸກຄັ້ງ ເພື່ອແຈ້ງຕໍ່ເຈົ້າໜ້າທີ່ ໃນເວລາກວດກາ;
4. ໃບເຄື່ອນຍ້າຍ ຕ້ອງມີກາປະທັບຂອງກົມປ່າໄມ້ ທີ່ເປັນກາແດງເທົ່ານັ້ນ ຈຶ່ງຖືວ່າຖືກຕ້ອງຕາມກົດໝາຍ ໂດຍຊຸດໜຶ່ງມີ ສາມ ສະບັບ ແລະ ໃຊ້ໄດ້ແຕ່ສະບັບຕົ້ນເທົ່ານັ້ນ. ສ່ວນໃບສຳເນົາ, ໃບມີຮອຍລຶບ, ຂີດ-ຂ້າຕົວເລກ ຫຼື ຂີດ-ຂ້າຕົວໜັງສື ແມ່ນບໍ່ສາມາດໃຊ້ໄດ້;
5. ຫ້າມປອມແປງ,ຊື້-ຂາຍ ຫຼືໃຫ້ຜູ້ອື່ນນຳໃຊ້ໃບເຄື່ອນຍ້າຍໄມ້ສະບັບນີ້ຢ່າງເດັດຂາດ. ຖ້າຜູ້ໃດລະເມີດ ຈະໄດ້ຮັບໂທດຕາມກົດໝາຍ.

**ຫົວໜ້າພະແນກກະສິກຳ ແລະ ປ່າໄມ້**

**ບ່ອນນຳສົ່ງ:**

1. ກົມປ່າໄມ້ 01 ສະບັບ (ໃຊ້ຕາງລາຍງານ);
2. ຜູ້ໄດ້ຮັບອະນຸຍາດ 01 ສະບັບ (ເພື່ອປະຕິບັດ);
3. ເກັບຮັກສາໄວ້ 01 ສະບັບ.

ແບບພິມ 7 ກ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ໃບນຳສົ່ງໄມ້ທ່ອນ ສະໜາມ II ຫາສະໜາມ III ໃນເຂດປ່າຜະລິດ

| | | | |
|---|---|---|---|
| ປ້ວງແຜນຈັດສັນ | | ເຂດຂຸດຄົ້ນຍ່ອຍ | |
| ເຂດປ່າຜະລິດ | | FSC (ແມ່ນ/ບໍ່ແມ່ນ) | |
| ເຂດຄຸ້ມຄອງ | | | |

| | |
|---|---|
| ຊື່ສະໜາມ II | |
| ຊື່ສະໜາມ III | |

| | |
|---|---|
| ວັນທີ | |
| ໃບນຳສົ່ງໄມ້ທີ | |
| ເລກທີ ກອງ | |
| ບໍລິສັດ ຂົນສົ່ງ | |
| ທະບຽນລົດບັນທຸກ | |

| ລ/ດ | ຄຸ້ມຂຸດຄົ້ນ | ແລວແມ່ | ແລວປີກ | ລທ ສຂຂ | ເບີຕົ້ນ | ທ່ອນທີ | ເລກທີ ຈຊນພ | ຊື່ຊະນິດພັນໄມ້ ພາສາລາວ | ລະຫັດ ຊະນິດພັນໄມ້ | ຊື່ວິທະຍາສາດ | ລວງຍາວ (ມ]) | ໜດ D [(ຊມ)] | ບໍລິມາດ (ມ$^3$) | ຊຄພ ກ/ຂ/ຄ | FSC (ແມ່ນ/ບໍ່ແມ່ນ) |
|---|---|---|---|---|---|---|---|---|---|---|---|---|---|---|---|
| | | | | | | | | | | | | | | | |
| | | | | | | | | | | | | | | | |
| | | | | | | | | | | | | | | | |
| | | | | | | | | | | | | | | | |
| | | | | | | | | | | | | | | | |
| | | | | | | | | | | | | | | | |
| | | | | | | | | | | | | | | | |
| | | | | | | | | | | | | | | | |

**ພະນັກງານຄຸ້ມຄອງໄມ້ ສະໜາມ II** **ຜູ້ຂັບລົດບັນທຸກ** **ຜູ້ຊື້ໄມ້**

ແບບພິມ 7 ຂ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ໃບນຳສົ່ງໄມ້ທ່ອນ ສະໜາມ II ຫາສະໜາມ III ໃນເຂດຫັນປ່ຽນທີ່ດິນປ່າໄມ້ ແລະ ເຂດກໍ່ສ້າງພື້ນຖານໂຄງລ່າງ

| | |
|---|---|
| ຊື່ໂຄງການ | |
| ປີ | |

| | |
|---|---|
| ຊື່ສະໜາມ II | |
| ຊື່ສະໜາມ III | |

| | |
|---|---|
| ວັນທີ | |
| ໃບນຳສົ່ງໄມ້ທີ | |
| ເລກທີ ກອງ | |
| ບໍລິສັດ ຂົນສົ່ງ | |
| ທະບຽນລົດບັນທຸກ | |

| ລ/ດ | ລະຫັດເມືອງ | ລະຫັດໜ່ວຍ ຊຸດຄົ້ນ | ຕອນຊຸດຄົ້ນ | ເບີຕົ້ນ | ເບີທ່ອນໄມ້ | ເບີຈັດຊັ້ນຄຸນນະພາບ | ຊື່ຊະນິດພັນ | ລະຫັດຊະນິດພັນ | CITES ປີ/ນ້ຳເບີ | ລວງຍາວ (ມ) | ໜ້າຕັດ (ຊມ) | ບໍລິມາດ ($м^3$) | ປະເພດ ກ/ຂ/ຄ |
|---|---|---|---|---|---|---|---|---|---|---|---|---|---|
| | | | | | | | | | | | | | |
| | | | | | | | | | | | | | |
| | | | | | | | | | | | | | |
| | | | | | | | | | | | | | |
| | | | | | | | | | | | | | |
| | | | | | | | | | | | | | |

ພະນັກງານຄຸ້ມຄອງໄມ້ ສະໜາມ II ຜູ້ຂັບລົດບັນທຸກ ຜູ້ຊື້ໄມ້